# ອົງການລາວເພື່ອຄວາມກ້າວຫນ້າໃນສະຫະຣັຖ

# LAO ADVANCEMENT ORGANIZATION OF AMERICA

ວັນທີ 01 ເດືອນມີນາ ປີ ຄສ. 2010

<u>ຮຽນ:</u> ທ່ານປະທານ, ຜອ ແລະຫົວຫນ້າຄນະບໍຣິຫານງານ ສະມາຄົມ ແລະອົງການຈັດຕັ້ງຕ່າງໆ
ພາຍໃນຣັຖມິນີໂຊຕາ ທີ່ຮັກແພງ ແລະນັບຖື

<u>ເລື້ອງ:</u> <u>ຂໍຄວາມຮ່ວມມືຈາກອົງການຈັດຕັ້ງ ແລະສະມາຄົມຂອງທ່ານ</u>

ອົງການລາວເພື່ອຄວາມກ້າວຫນ້າໃນສະຫະຣັຖ (ລາວ-ອາເມຣິກາ) ໄດ້ສ້າງຕັ້ງຂຶ້ນໃນປີ 1988 ຊຶ່ງມີຫນ້າທີ່ສ້າງຄວາມເຂັ້ມແຂງຮອບດ້ານໃຫ້ແກ່ປະຊາຄົມລາວຢ່າງເປັນຮູປທັມ ບໍ່ວ່າທາງດ້ານການປົກປັກຮັກສາ ແລະຜັນຂຍາຍປະເພນີ-ວັທນະທັມອັນດີງາມຂອງລາວ, ກໍ່ຄືການສຶກສາຮ່ຳຮຽນຂອງເດັກນ້ອຍເຍົາວະຊົນລາວໃນທຸກໆຂົງເຂດ ແລະຕລອດຮອດການຮຽນຮູ້ໃນການປັບຕົວເຂົ້າສູ່ວິຖີຊີວິດອັນໃຫມ່ຂອງຜູ້ສູງອາຍຸໃນສັງຄົມໃຫມ່ ເພື່ອຜົນສຳເຣັດຂອງຊາວລາວ ແລະເພື່ອບົດບາດຂອງລູກຫຼານ-ຜູ້ສືບທອດໃນຣັຖມິນີໂຊຕາໃນອານາຄົດ. ດ້ວຍການຮ່ວມກັນບຸກເບີກ ແລະການເອົາໃຈໃສ່-ໃຫ້ການສນັບສນູນຢ່າງບໍ່ລົດລະຂອງອົງການຈັດຕັ້ງ ແລະສະມາຄົມຕ່າງໆພາຍໃນຣັຖມິນີໂຊຕາໃນໄລຍະຜ່ານມາ, ລາວ-ອາເມຣິກາ ກໍ່ຄືຊຸມຊົນຊາວລາວ, ພວກເຮົາຈຶ່ງ ໄດ້ມີ "ສູນວັທນະທັມລາວ" ເປັນຂອງຕົນເອງຈົນມາຮອດສູ່ມື້ນີ້.

ເພື່ອຍາດເອົາໄດ້ ຊຶ່ງຜົນປໂຍດທີ່ຄວນຈະໄດ້ຮັບ ຄືກັບຊຸມຊົນສ່ວນນ້ອຍອື່ນໆ ມາສູ່ສັງຄົມລາວຈາກຣັຖບານອາເມຣິກາໃນຂອບເຂດທົ່ວຣັຖ, ລາວ-ອາເມຣິກາຈຶ່ງຢາກຂໍຮ້ອງນຳທາງສະມາຄົມຂອງທ່ານ ຈົ່ງໄດ້ໃຫ້ການສນັບສນູນໃນການເຮັດຫນ້າທີ່ລວມອັນຍິ່ງໃຫຍ່ ແລະມີກຽດອັນນີ້ໃຫ້ແກ່ສັງຄົມລາວ: ປະຈຸບັນ, ລາວ-ອາເມຣິກາ <u>ກຳລັງບຸກເບີກໂຄງການເພື່ອສຸຂພາບຂອງຊຸມຊົນຊາວລາວພາຍໃນຣັຖ</u> ຊຶ່ງໃນໄລຍະຜ່ານມາ, ສັງຄົມລາວໄດ້ຖືກສັງຄົມສ່ວນໃຫຍ່ປ່ອຍປະລະເລີຍ ແລະໃຫ້ຢູ່ຫ່າງໄກຈາກສິດທີ່ດັ່ງກ່າວ ເປັນຕົ້ນການຊ່ວຍເຫຼືອບໍ່ພຽງພໍ, ການຂາດຂໍ້ມູນທີ່ຈຳເປັນ ແລະອື່ນໆ. , ດັ່ງນັ້ນ, ລາວ-ອາເມຣິກາ ຈຶ່ງໄດ້ເຮັດຈົດຫມາຍສບັບນີ້ ພ້ອມກັບຕິດຄັດເອກກະສານສນັບສນູນຈາກທ່ານ ເພື່ອເປັນການລິເລີ້ມໂຄງການ.

ຂໍຂອບໃຈລ່ວງຫນ້າ ໃນການໃຫ້ຄວາມສນັບສນູນຂອງສະມາຄົມຂອງທ່ານມານະໂອກາດນີ້ດ້ວຍ

ດ້ວຍຄວາມນັບຖື ແລະຮັກແພງ

ຂາວ ອິນສີຊຽງໃຫມ່,
ຫົວຫນ້າຄນະບໍຣິຫານງານ
ອົງການລາວເພື່ອຄວາມກ້າວຫນ້າໃນສະຫະຣັຖ

Lao Cutural Center Building. 2648 West Broadway Avenue. Minneapolis, MN 55411
Tel: 612.302.9048 | Fax: 612.522.2431. E-mail: laoamerica@laoamerica.org. Website: www.laoamerica.org